ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

********

ກະຊວງໂຍທາທິການ ແລະ ຂົນສົ່ງ

# ກອບການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ (ESMF)

ການກະກຽມເຄື່ອງມື ກອບການຄຸ້ມຄອງດ້ານ ສິ່ງແວດລ້ອມ ແລະ ສັງຄົມ

ສຳລັບໂຄງການປັບປຸງເສັ້ນທາງທີ່ທົນທານຕໍ່ການປ່ຽນແປງດິນຟ້າອາກາດ ແລະ ເພື່ອການເຊື່ອມໂຍງເຊື່ອມຈອດ ແຫ່ງ ສປປ ລາວ (CRRCIP)

ກະກຽມໂດຍ:

ກົມຂົວທາງ (DOR) ແລະ

ສະຖາບັນໂຍທາທິການ ແລະ ຂົນສົ່ງ (PTI)

ສະບັບປັບປຸງ ວັນທີ 13 ພຶດສະພາ 2024

# TABLE OF CONTENTS


Executive Summary ........ **Error! Bookmark not defined.**

1. Introduction ........ **Error! Bookmark not defined.**

2. Project Description ........ **Error! Bookmark not defined.**

   2.1 Project Components ........ **Error! Bookmark not defined.**

   2.2 Project Activities ........ **Error! Bookmark not defined.**

   2.3 Project Design and Schedule ........ **Error! Bookmark not defined.**

   2.4 Implementing Agencies ........ **Error! Bookmark not defined.**

3. Environmental and Social Policies, Regulations and Laws ........ **Error! Bookmark not defined.**

   3.1 Key Legislation ........ **Error! Bookmark not defined.**

   3.2 National ESIA Legislation ........ **Error! Bookmark not defined.**

   3.3 World Bank Standards and Key Gaps with National Framework ........ **Error! Bookmark not defined.**

4. Potential Environmental and Social Risk Impacts and Standard Mitigation Measures **Error! Bookmark not defined.**

   4.1 Preamble ........ **Error! Bookmark not defined.**

   4.2 Positive Impacts ........ **Error! Bookmark not defined.**

   4.3 Potential Adverse Impacts ........ **Error! Bookmark not defined.**

   4.4 Gender Assessment ........ **Error! Bookmark not defined.**

5. Procedures and implementation arrangements ........ **Error! Bookmark not defined.**

   5.1 Environmental and Social Risk Management Procedures – Component 1 ... **Error! Bookmark not defined.**

      5.1.1 General ........ **Error! Bookmark not defined.**

      5.1.2 A Note on Implementation Structure ........ **Error! Bookmark not defined.**

      5.1.3 Sub-project Assessment and Analysis ........ **Error! Bookmark not defined.**

      5.1.4 Sub-project Formulation and Planning ........ **Error! Bookmark not defined.**

      5.1.5 Implementation and Monitoring ........ **Error! Bookmark not defined.**

      5.1.6 Review and Evaluation ........ **Error! Bookmark not defined.**

   5.2 Component 2 ........ **Error! Bookmark not defined.**

   5.3 Component 3 ........ **Error! Bookmark not defined.**

   5.4 Implementation Arrangements ........ **Error! Bookmark not defined.**

      5.4.1 General ........ **Error! Bookmark not defined.**

      5.4.2 Project Support ........ **Error! Bookmark not defined.**

   5.5 Proposed Training and Capacity Building ........ **Error! Bookmark not defined.**

   5.6 Estimated Budget ........ **Error! Bookmark not defined.**

6. Stakeholder Engagement, Disclosure and Consultations ........ **Error! Bookmark not defined.**

   6.1 Stakeholder Engagement Plan ........ **Error! Bookmark not defined.**

6.2 Disclosure ........................................................................... **Error! Bookmark not defined.**

6.3 Summary of Consultations to Date ................................................ **Error! Bookmark not defined.**

## List of Tables

Table 1: List of CRRCI Sub-projects ............................................................ **Error! Bookmark not defined.**
Table 2: Key E&S Legislation of Lao PDR ...................................................... **Error! Bookmark not defined.**
Table 3: Relevant World Bank ESS ................................................................ **Error! Bookmark not defined.**
Table 4: Environmental and Social Risks and Mitigation & Management Measures ..... **Error! Bookmark not defined.**
Table 5: Project Cycle and E&S Management Procedures .............................. **Error! Bookmark not defined.**
Table 6: Implementation Arrangements ......................................................... **Error! Bookmark not defined.**
Table 7: Proposed Training and Capacity Building Approach ........................... **Error! Bookmark not defined.**
Table 8: ESMF Implementation Budget .......................................................... **Error! Bookmark not defined.**
Table 9: Key Comments to Date ................................................................... **Error! Bookmark not defined.**

# ຄຳຫຍໍ້ ແລະ ຄວາມໝາຍຂອງຄຳຫຍໍ້

| | | |
|---|---|---|
| ACM | Asbestos Containing Materials | |
| AH | Affected Households | ຄົວເຮືອນທີ່ໄດ້ຮັບຜົນກະທົບ |
| ARAP | Abbreviated resettlement action plan | ແຜນຈັດສັນຍົກຍ້າຍແບບຫຍໍ້ |
| BD | Bidding document | ເອກະສານປະມູນ |
| CD | Contractor document | ເອກະສານສັນຍາ |
| CERC | Contingency Emergency Response Component | ການຕອບໂຕ້ເຫດການສຸກເສີນ |
| CHSP | Community Health and Safety Plan | ແຜນດ້ານສຸຂະພາບ ແລະ ຄວາມປອດໄພຂອງຊຸມຊົນ |
| COI | Corridor of Impact | ຂອບເຂດແລວຂອງຜົນກະທົບ |
| COVID19 | Corona Virus 19 | ເຊື້ອໄວຣັດ ໂຄວິດ 19 |
| DAFO | District Agriculture and Forestry Office | ຫ້ອງການກະສິກຳ ແລະ ປ່າໄມ້ ຂອງ ເມືອງ |
| DPWT | Provincial Offices of Department of Public Works and Transport | ພະແນກ ຍທຂ ແຂວງ |
| DOLSW | Provincial Department of Labour and Social Welfare | ພະແນກ ແຮງງານ ແລະ ສະຫວັດດີການສັງຄົມ ແຂວງ |
| DOR | Department of Road | ກົມຂົວທາງ |
| DWR | Department of Water Resources | ກົມຊັບພະຍາກອນນໍ້າ |
| C-ESMP | Contractor's Environment and Social Management Plan | ແຜນຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ ຂອງຜູ້ຮັບເໝົາກໍ່ສ້າງ |
| ECC | Environmental Compliance Certificate | ໃບຢັ້ງຢືນສິ່ງແວດລ້ອມ |
| EDPD | Environmental Research and Disaster Prevention Division | ພະແນກຄົ້ນຄວ້າສິ່ງແວດລ້ອມ ແລະ ປ້ອງກັນໄພພິບັດ |
| EG | Ethnic Groups | ກຸ່ມຊົນເຜົ່າ |
| EGEP | Ethnic Group Engagement Plan | ແຜນສົ່ງສົມການມີສ່ວນຮ່ວມຂອງກຸ່ມຊົນເຜົ່າ |
| ESCP | Environmental and Social Commitment Plan | ແຜນພັນທະນາດ້ານສິ່ງແວດລ້ອມ ແລະ ສັງຄົມ |
| ESF | Environmental and Social Framework | ກອບດ້ານສິ່ງແວດລ້ອມ ແລະ ສັງຄົມ |
| ESIA | Environment and Social Impact Assessment | ການປະເມີນຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມ |
| ESMF | Environment and Social Management Framework | ກອບການຄຸ້ມຄອງດ້ານສິ່ງແວດລ້ອມ ແລະ ສັງຄົມ |
| ESMP | Environment and Social Management Plan | ແຜນຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ |
| ESMWG | Environment and Social Monitoring Working Group | ຄະນະກຳມະການຕິດຕາມກວດກາສິ່ງແວດລ້ອມ ແລະ ສັງຄົມ |
| ESRS | Environmental and Social Review Summary | ການສັງລວມການທົບທວນສິ່ງແວດລ້ອມ ແລະ ສັງຄົມ |
| ESS | Environmental and Social Standards | ມາດຕະຖານດ້ານສິ່ງແວດລ້ອມ ແລະ ສັງຄົມ |
| FGD | Focused Group Discussion | ການແບ່ງກຸມສົນທະນາສະເພາະ |
| FPIC | Free Prior and Informed Consent | ແຈ້ງລ່ວງໜ້າກ່ຽວກັບ ອິດສະຫຼະໃນການມີສ່ວນຮ່ວມ |
| GAP | Gender Action Plan | ແຜນດຳເນີນວຽກງານບົດບາດຍິງຊາຍ |
| GBV | Gender Based Violence | ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ |
| GDP | Gross Domestic Product | ຍອດຜະລິດຕະພັນພາຍໃນ |
| GOL | Government of Lao PDR | ລັດຖະບານແຫ່ງ ສປປ ລາວ |
| GRM | Grievance Redress Mechanism | ກົນໄກແກ້ໄຂຄຳຮ້ອງທຸກ |
| HIV/AIDS | Human Immunodeficiency Virus / Acquired Immune Deficiency Syndrome | ພະຍາດຕິດຕໍ່ທາງເພດສຳພັນ/ໂລດເອດ |
| IUCN | International Union for Conservation of Nature | ສະຫະພັນສາກົນເພື່ອການອະນຸລັກທຳມະຊາດ |

| | | |
|---|---|---|
| KBA | Key Biodiversity Area | ເຂດຊີວະນາໆພັນທີ່ສຳຄັນ |
| KM | Khammouan Province | ແຂວງຄຳມ່ວນ |
| LFND | Lao Front for National Development | ແນວລາວສ້າງຊາດ |
| LMP | Labour Management Procedures | ຂັ້ນຕອນການຄຸ້ມຄອງແຮງງານ |
| LWU | Lao Women' s Union | ສະຫະພັນແມ່ຍິງລາວ |
| MAF | Ministry of Agriculture and Forestry | ກະຊວງກະສິກຳ ແລະ ປ່າໄມ້ |
| MICT | Ministry of Information Culture and Tourism | ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ |
| MOF | Ministry of Finance | ກະຊວງການເງິນ |
| MONRE | Ministry of Natural Resource and Environment | ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ |
| MPWT | Ministry of Public Works and Transport | ກະຊວງໂຍທາທິການ ແລະ ຂົນສົ່ງ |
| NCAW | National Commission for the Advancement of Women | ຄະນະກຳມະການແຫ່ງຊາດສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ |
| NGO | Non Government Organization | ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ |
| NTFP | Non-timber forest product | ເຄື່ອງປ່າຂອງດົງ |
| NUOL | National University of Laos | ມະຫາວິທະຍາໄລແຫ່ງຊາດ |
| OHS | Occupational Health and Safety | ສຸຂະພາບ ແລະ ຄວາມປອດໄພຂອງແຮງງານ |
| OPBC | Output and Performance-Based Contracts | ສັນຍາທີ່ອີງຕາມ ການປະຕິບັດ ແລະ ຜົນສຳເລັດຂອງວຽກ |
| OPRC | Output and Performance-based Road Contracts | ສັນຍາກໍ່ສ້າງທາງທີ່ອີງຕາມ ການປະຕິບັດ ແລະ ຜົນສຳເລັດຂອງວຽກ |
| PA | Provincial Assembly | ສະພາປະຊາຊົນແຂວງ |
| PAH | Project Affected Households | ຄົວເຮືອນທີ່ໄດ້ຮັບຜົນກະທົບຈາກໂຄງການ |
| PAP | Project affected people | ຄົນທີ່ໄດ້ຮັບຜົນກະທົບ |
| PAFO | Provincial Agriculture and Forestry Offices | ພະແນກກະສິກຳ ແລະ ປ່າໄມ້ແຂວງ |
| PIU | Project Implementation Unit | ຄະນະຈັດຕັ້ງປະຕິບັດໂຄງການ |
| PMU | Project Management Unit | ຄະນະຄຸ້ມຄອງໂຄງການ |
| PONRE | Provincial Offices of Natural Resource and Environment | ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ |
| PPE | Personal Protective Equipment | ເຄື່ອງມືປ້ອງກັນບຸກຄົນ |
| PRC | Provincial Resettlement Committee | ຄະນະກຳມະການຍົກຍ້າຍສິ່ງກີດຂວາງແຂວງ |
| PTI | Public Works and Transport Institute | ສະຖາບັນໂຍທາທິການ ແລະ ຂົນສົ່ງ |
| RAP | Resettlement Action Plan | ແຜນຈັດສັນຍົກຍ້າຍ ແລະ ຊົດເຊີຍ |
| RPF | Resettlement Policy Framework | ກອບນະໂຍບາຍການຈັດສັນຍົກຍ້າຍ ແລະ ຊົດເຊີຍ |
| SEA/SH | Sexual Exploitation and Abuse and Sexual Harassment | ການໃຊ້ຄວາມຮຸນແຮງທາງເພດ ແລະ ການລ່ວງລະເມີດ ແລະ ການຄຸກຄາມທາງເພດ |
| SEP | Stakeholder Engagement Plan | ແຜນການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງ |
| SMWG | Safeguards Monitoring Working Group | ຄະນະກຳມະການຕິດຕາມກວດກາສິ່ງແວດລ້ອມ |
| SPS | Sanitary and Phytosanitary | ສຸຂາພິບານ ແລະ ສຸຂະອະນາໄມ |
| SRV | Saravan Province | ແຂວງສາລະວັນ |
| SS-BMP | Site Specific Biodiversity Management Plan | ແຜນການຄຸ້ມຄອງຊີວະນາໆພັນພື້ນທີ່ສະເພາະ |
| SS-ESMP | Site Specific Environmental and Social Management Plan | ແຜນການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມພື້ນທີ່ສະເພາະ |
| STD | Sexually Transmitted Disease | ພະຍາດຕິດຕໍ່ທາງເພດສຳພັນ |
| SVK | Savannakhet Province | ແຂວງສະຫວັນນະເຂດ |
| UNICEF | United Nations Children's Fund | ກອງທຶນເດັກນ້ອຍຂອງສະຫະປະຊາຊາດ |
| UNPD | United Nations Development Programme | ໂຄງການພັດທະນາສະຫະປະຊາຊາດ |
| UXO | Unexploded Ordnance | ລະເບີດບໍ່ທັນແຕກ |
| VAWC | Violence Against Women and their Children | ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ |

| | | |
|---|---|---|
| VAC | Violence Against Children | ຄວາມຮຸນແຮງຕໍ່ເດັກນ້ອຍ |
| WB | The World Bank | ທະນາຄານໂລກ |
| WHO | World Health Organization | ອົງການອະນາໄມໂລກ |

# ບົດສັງລວມຫຍໍ້

1. ທະນາຄານໂລກ (WB) ຈະໃຫ້ການສະໜັບສະໜູນກະຊວງໂຍທາທິການ ແລະ ຂົນສົ່ງ (MPWT) ໃນການຈັດຕັ້ງປະຕິບັດ ໂຄງການປັບປຸງເສັ້ນທາງທີ່ທົນທານຕໍ່ການປ່ຽນແປງດິນຟ້າອາກາດ ແລະ ເພື່ອການເຊື່ອມໂຍງເຊື່ອມຈອດ ແຫ່ງ ສປປ ລາວ (CRRCIP). ໂຄງການ CRRCIP ປະກອບດ້ວຍ 03 ອົງປະກອບດັ່ງຕໍ່ໄປນີ້:

- **ອົງປະກອບທີ 1: ເສັ້ນທາງເຂົ້າເຖິງທີ່ທົນທານຕໍ່ການປ່ຽນແປງດິນຟ້າອາກາດ -** ສະໜັບສະໜູນການປັບປຸງເສັ້ນທາງຫຼວງຂອງເມືອງ ແລະ ທາງຊົນນະບົດ ທີ່ມີລວງຍາວປະມານ 300 ກິໂລແມັດ ໂດຍຄຳນຶງເຖິງບັນຫາການປ່ຽນແປງດິນຟ້າອາກາດ ແລະ ຄວາມສ່ຽງໄພພິບັດ. ເສັ້ນທາງໂຄງການທີ່ສະເໜີມາແມ່ນຕັ້ງຢູ່ 3 ແຂວງ ດັ່ງນີ້:

  ກ) ແຂວງ ຄຳມ່ວນ (ເສັ້ນທາງໂຄງການຍ່ອຍ 3 ເສັ້ນ ມີລວງຍາວປະມານ 87 ກິໂລແມັດ);

  ຂ) ແຂວງ ສະຫວັນນະເຂດ (ເສັ້ນທາງໂຄງການຍ່ອຍ 6 ເສັ້ນ ມີລວງຍາວປະມານ 124 ກິໂລແມັດ);

  ຄ) ແຂວງ ສາລະວັນ (ເສັ້ນທາງຂອງໂຄງການຍ່ອຍ 4 ເສັ້ນ ມີລວງຍາວປະມານ 84 ກິໂລແມັດ).

- **ອົງປະກອບທີ 2**: **ການພັດທະນາອົງການຈັດຕັ້ງ -** ສະໜັບສະໜູນ ກະຊວງ ຍທຂ ໃນການສ້າງຂີດຄວາມສາມາດ ເຊັ່ນ: ການຝຶກອົບຮົມກ່ຽວກັບບັນຫາ ທີ່ກ່ຽວຂ້ອງ ລວມທັງຄວາມປອດໄພຕາມທ້ອງຖະໜົນ, ບັນຫາທາງເພດ, ການມີສ່ວນຮ່ວມຂອງຊຸມຊົນ ແລະ ຄວາມສ່ຽງຈາກໄພພິບັດຈາກການປ່ຽນແປງດິນຟ້າອາກາດ.

- **ອົງປະກອບທີ 3:** ອົງປະກອບການຕອບໂຕ້ເຫດການສຸກເສີນທີ່ອາດຈະເກີດຂຶ້ນ: ຊ່ວຍ ກະຊວງ ຍທຂ ໃນກໍລະນີເກີດວິກິດການທີ່ຄາດບໍ່ເຖິງ ຫຼື ເຫດການສຸກເສີນ.

2. ໂຄງການນີ້ມີຈຸດປະສົງແນໃສ່ປັບປຸງການເຊື່ອມໂຍງເຊື່ອມຈອດ ກັບທາງຫຼວງແຫ່ງຊາດ ແລະ ເຂົ້າເຖິງແລວເສດຖະກິດຕາເວັນອອກ-ຕາເວັນຕົກ ລະຫວ່າງ ຫວຽດນາມ ແລະ ໄທ ເພື່ອເພີ່ມທະວີການເຊື່ອມໂຍງຂອງຕະຫຼາດ ແລະ ທັງເປັນການສົ່ງເສີມການເຕີບໂຕດ້ານເສດຖະກິດຂອງທ້ອງຖິ່ນ.

3. ຂອບການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ (ESMF) ສະບັບນີ້ ໄດ້ຖືກກະກຽມຂຶ້ນ ເພື່ອຮັບປະກັນວ່າ ໂຄງການດັ່ງກ່າວ ຕອບສະໜອງໄດ້ຕາມເງື່ອນໄຂຄວາມຕ້ອງການດ້ານສິ່ງແວດລ້ອມ ແລະ ສັງຄົມ ຂອງ WB, ໂດຍການກຳນົດຄວາມສ່ຽງ ແລະ ຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມ ຂອງໂຄງການທີ່ອາດຈະເກີດຂຶ້ນ ແລະ ສະເໜີມາດຕະການຫຼຸດຜ່ອນທີ່ເໝາະສົມເພື່ອຄຸ້ມຄອງຄວາມສ່ຽງ ແລະ ຜົນກະທົບເຫຼົ່ານັ້ນ. ESMF ສະແດງໃຫ້ເຫັນກ່ຽວກັບກົດໝາຍ ແລະ ລະບຽບການຂອງ ສປປ ລາວ ແລະ ນະໂຍບາຍຂອງ WB ທີ່ໃຊ້ ຢູ່ໃນໂຄງການນີ້ ແລະ ອະທິບາຍເຖິງຫຼັກການ, ວິທີການ, ການຈັດການຈັດຕັ້ງປະຕິບັດ ແລະ ມາດຕະການຫຼຸດຜ່ອນຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມ ທີ່ຈະຕ້ອງຈັດຕັ້ງປະຕິບັດ.

## ຜົນກະທົບ ແລະ ມາດຕະການຫຼຸດຜ່ອນ

4. ໃນຂະນະທີ່ໂຄງການຄາດວ່າຈະສົ່ງຜົນກະທົບທາງບວກຢ່າງກວ້າງຂວາງ, ໂຄງການດັ່ງກ່າວກໍ່ຈະເຮັດໃຫ້ເກີດມີຜົນກະທົບທາງລົບ ທີ່ບໍ່ໄດ້ຕັ້ງໃຈທີ່ກ່ຽວຂ້ອງກັບການປັບປຸງເສັ້ນທາງ. ຜົນກະທົບທາງລົບ ແລະ ຄວາມສ່ຽງເຫຼົ່ານີ້ ແມ່ນຖືວ່າເປັນຜົນກະທົບປານກາງ ແລະ ສ່ວນຫຼາຍຈະເປັນຜົນກະທົບຊົ່ວຄາວ, ຢູ່ທ້ອງຖິ່ນ ແລະ ສາມາດຄຸ້ມຄອງໄດ້ໂດຍຜ່ານມາດຕະການຫຼຸດຜ່ອນຜົນກະທົບທີ່ໄດ້ສະເໜີມາ. ຄວາມສ່ຽງດ້ານສິ່ງແວດລ້ອມ ແລະ ສັງຄົມ ທີ່ສຳຄັນສຳລັບກິດຈະກຳຂອງໂຄງການທີ່ອາດຈະເກີດຂຶ້ນ ເຊິ່ງໄດ້ກຳນົດເປັນສ່ວນໜຶ່ງຂອງການກະກຽມຂອງ ESMF ເຊິ່ງສັງລວມດັ່ງຕໍ່ໄປນີ້:

- ວຽກງານກໍ່ສ້າງທົ່ວໄປທີ່ສົ່ງຜົນກະທົບດ້ານສິ່ງແວດລ້ອມ ເຊັ່ນ: ວຽກດິນ, ການເຊາະເຈື່ອນຂອງດິນ, ຜົນກະທົບຕໍ່ການໄຫຼຂອງນໍ້າ ແລະ ຊີວະວິທະຍາຂອງແມ່ນໍ້າ, ສຽງ, ຂີ້ຝຸ່ນ, ສິ່ງເສດເຫຼືອທີ່ເປັນອັນຕະລາຍ ແລະ ບໍ່ເປັນອັນຕະລາຍ, ຄວັນອາຍເສຍຈາກເຄື່ອງຈັກ ແລະ ນໍ້າມັນເຊື້ອໄຟຮົ່ວໄຫຼຈາກຍານພາຫະນະເວລາເຄື່ອນຍ້າຍດິນ, ການລົບກວນການສັນຈອນໃນລະຫວ່າງການກໍ່ສ້າງ, ດ້ານສຸຂະພາບ ແລະ ຄວາມປອດໄພ ຂອງພະນັກງານ-ກຳມະກອນ, ການບຸກເບີກທີ່ດິນຢູ່ນອກແລວທາງ ເພື່ອກໍ່ສ້າງແຄ້ມທີ່ພັກຂອງພະນັກງານ-ກຳມະກອນ, ບັນຫາລະເບີດບໍ່ທັນແຕກ (**UXO**), ແລະ ການນຳເອົາພືດພັນທີ່ບໍ່ແມ່ນພື້ນເມືອງ ເຂົ້າມາໂດຍ ເຈດຕະນາ ຫຼື ບໍ່ເຈດຕະນາ. ເມື່ອສະພາບເສັ້ນທາງໄດ້ຮັບການ

ປັບປຸງການຍົກລະດັບເສັ້ນທາງ ແລະ ການເຊື່ອມຕໍ່ເຄືອຂ່າຍເສັ້ນທາງທີ່ເພີ່ມຂຶ້ນ ອາດຈະສ້າງຜົນກະທົບທາງອ້ອມທີ່ຈະເກີດຂຶ້ນ ໂດຍສະເພາະແມ່ນພື້ນທີ່ກະສິກຳ, ພື້ນຖານໂຄງລ່າງ ທີ່ມີຕໍ່ປ່າໄມ້ແຄມທາງ ຫຼື ອາດຈະເພີ່ມການລັກລອບນຄ້າໄມ້ ແລະ ສັດປ່າທີ່ຜິດກົດໝາຍຢູ່ເຂດໃກ້ຄຽງກັບປ່າສະຫງວນ/ພື້ນທີ່ສະຫງວນ ແລະ ປ່າປ້ອງກັນ.

- ຜົນກະທົບທາງສັງຄົມທີ່ກ່ຽວອວຽກງານກັບການກໍ່ສ້າງໂດຍທົ່ວໄປ ເຊັ່ນ; 1) ຄວາມສ່ຽງຂອງການກີດກັ້ນ ແລະ ການເລືອກປະຕິບັດ ໂດຍສະເພາະກັບກຸ່ມຊົນເຜົ່າ, ແມ່ຍິງ ແລະ ກຸ່ມຄົນອ່ອນແອ ຈາກການວາງແຜນໂຄງການ, ການປຶກສາຫາລື, ການຈັດຕັ້ງປະຕິບັດ ແລະ ຜົນປະໂຫຍດ; 2) ຄວາມສ່ຽງທີ່ກ່ຽວຂ້ອງກັບແຮງງານ ແລະ ເງື່ອນໄຂການເຮັດວຽກຂອງພະນັກງານໂຄງການ, e.g. ຄວາມສ່ຽງດ້ານສຸຂະພາບ ແລະ ຄວາມປອດໄພໃນການເຮັດວຽກ (OHS), ການຂູດຮີດທາງເພດ ແລະ ການຄຸກຄາມທາງເພດ ແລະ ການລ່ວງລະເມີດທາງເພດ (SEA/SH), ການຖູດຮີດແຮງງານ ແລະ ການໃຊ້ແຮງງານເດັກ; 3) ຄວາມສ່ຽງທີ່ກ່ຽວຂ້ອງກັບສຸຂະພາບ ແລະ ຄວາມປອດໄພຂອງຊຸມຊົນ ລວມທັງຄວາມປອດໄພຕາມທ້ອງຖະໜົນ ໃນລະຫວ່າງການກໍ່ສ້າງ ແລະ ຫຼັງການກໍ່ທາງ, ການແຜ່ລະບາດຂອງພະຍາດ, ພະຍາດຕິດຕໍ່ທາງເດີນຫາຍໃຈ, ພະຍາດຕິດຕໍ່ທາງເພດສໍາພັນ (STDs, HIV/AID), ໂຄວິດ-19 ຈາກຜູ້ຮັບເໝົາ ແລະ ຄົນງານເຄື່ອນຍ້າຍ ແລະ SEA/SH; ແລະ 4) ການຍົກຍ້າຍຊົ່ວຄາວທາງເສດຖະກິດ, ການຈັດຫາທີ່ດິນຂະໜາດນ້ອຍ ແລະ ການຍົກຍ້າຍໂຄງສ້າງເລັກນ້ອຍ ແລະ/ຫຼື ຂໍ້ຈຳກັດການເຂົ້າເຖິງ ໃນໄລຍະການກໍ່ສ້າງ.

5. ການກວດສອບເບື້ອງຕົ້ນດ້ານສິ່ງແວດລ້ອມ ແລະ ສັງຄົມ (E&S) ຂອງພື້ນທີ່ ໃຫ້ສຳເລັດໂດຍເປັນສ່ວນຫນຶ່ງຂອງການກະກຽມຂອງ ESMF ໃນນີ້ຍັງໄດ້ກຳນົດຕົວຮັບທີ່ລະອຽດອ່ອນຢູ່ໃກ້ກັບ ບັນດາໂຄງການຍ່ອຍ (ທາງ) ລວມທັງໂຮງຮຽນ, ໂຮງຫມໍ ແລະ ຕະຫຼາດຊຸມຊົນ. ການກວດສອບຍັງໄດ້ລະບຸວ່າ ໄພພິບັດທາງທຳມະຊາດສາມາດເກີດຂຶ້ນອີກໃນຫຼາຍບ່ອນ ລວມທັງໄພນໍ້າຖ້ວມ ແລະ ດິນເຈື່ອນ ໂດຍສະເພາະຢູ່ແຂວງສາລະວັນ. ຖະໜົນຫົນທາງບາງສາຍໃກ້ກັບປ່າສະຫງວນ ແລະ ປ່າປ້ອງກັນ, ເຖິງແມ່ນວ່າບໍ່ຢູ່ໃນພື້ນທີ່ເລົ່ານັ້ນກໍ່ຕາມ, ແຕ່ບາງເສັ້ນກໍ່ຜ່ານປ່າຜະລິດ. ນອກຈາກນັ້ນ, ບາງເສັ້ນທາງແມ່ນຢູ່ໃກ້ກັບເຂດຊີວະນາໆພັນທີ່ສຳຄັນ (KBAs), ເຖິງແມ່ນວ່າບໍ່ຢູ່ໃນພື້ນທີ່ເລົ່ານັ້ນກໍ່ຕາມ. ອີງຕາມການປຶກສາຫາລື ແລະ ແບ່ງກຸ່ມສົນທະນາ (FGD) ກັບຊຸມຊົນທ້ອງຖິ່ນ, ການຄ້າມະນຸດໄດ້ເກີດຂຶ້ນພາຍໃນພື້ນທີ່ໂຄງການໃນ **3** ປີຜ່ານມາ.

6. ເພື່ອຫຼຸດຜ່ອນຄວາມສ່ຽງດ້ານ E&S ໃນໂຄງການ, ສະນັ້ນ ໃນລະຫວ່າງການເລືອກເສັ້ນທາງ ໄດ້ມີການນຳໃຊ້ສອງມາດຕະການດັ່ງຕໍ່ໄປນີ້:

- ໂຄງການທີ່ສະເໜີຈະບໍ່ສະໜອງທຶນໃຫ້ແກ່ເສັ້ນທາງຊ່ວງທີ່ຢູ່ພາຍໃນເຂດປ່າສະຫງວນທີ່ມີຄຸນຄ່າທາງດ້ານຊີວະນາໆພັນທີ່ສຳຄັນລະດັບສາກົນ ຫຼື ລະດັບຊາດ ທີ່ອາດຈະກວມເອົາປ່າສະຫງວນ ແລະ ປ່າປ້ອງກັນ ເພື່ອຫຼີກລ່ຽງຄວາມສ່ຽງ ແລະ ຜົນກະທົບທາງດ້ານຊີວະນາໆພັນທີ່ມີມູນຄ່າສຳຄັນ, ແຫຼ່ງທີ່ຢູ່ອາໄສທີ່ສຳຄັນ ແລະ ເປັນທຳມະຊາດ ແລະ ໜ້າທີ່ທາງນິເວດວິທະຍາ; ແລະ
- ໂຄງການດັ່ງກ່າວຈະບໍ່ສະໜອງທຶນໃຫ້ແກ່ກິດຈະກຳຕ່າງໆ ລວມທັງໂຄງການຍ່ອຍຂອງທາງທີ່ເຮັດໃຫ້ເກີດການຍົກຍ້າຍປະຊາຊົນຫຼາຍກວ່າ 200 ຄົນ ຫຼື 40 ຄອບຄົວໄດ້ຮັບຜົນກະທົບ ຫຼື ເຮັດໃຫ້ຫຼາຍກວ່າ 40 ຄອບຄົວໄດ້ຮັບຜົນກະທົບໜັກ ເຊັ່ນ: ສູນເສຍຊັບສິນການຜະລິດ 10% ຫຼື ຫຼາຍກວ່ານັ້ນ ລວມທັງການສູນເສຍທີ່ດິນທີ່ເປັນກຳມະສິດຂອງບຸກຄົນ.

7. ນອກຈາກນັ້ນ ESMF ຍັງມີມາດຕະການຫຼຸດຜ່ອນ ແລະ ການຄຸ້ມຄອງຕ່າງໆ ທີ່ຈະນຳໄປໃຊ້ໃນໂຄງການຍ່ອຍໂດຍອີງໃສ່ການນຳໃຊ້ຢ່າງກວ້າງຂວາງໃນໂຄງການເສັ້ນທາງທ້ອງຖິ່ນທີ່ຄ້າຍຄືກັນທີ່ພວມດຳເນີນຢູ່ ສປປ ລາວ ທີ່ໄດ້ຮັບທຶນຈາກ WB. ມາດຕະການເຫຼົ່ານີ້ແມ່ນໄດ້ຮັບການເພີ່ມເຕີມຈາກການແນະນຳສະເພາະເພີ່ມເຕີມໂດຍອີງໃສ່ການຄົ້ນພົບຈາກການກັ່ນກອງສະຖານທີ່. ມາດຕະການຫຼຸດຜ່ອນໄລຍະການພັດທະນາ (ລວມທັງໄລຍະການອອກແບບ) ລວມມີມາດຕະການເພື່ອຮັບປະກັນວ່າເສັ້ນທາງຖືກອອກແບບເພື່ອຮັບມືກັບການປ່ຽນແປງຂອງດິນຟ້າອາກາດ ແລະ ລວມມີມາດຕະການຄວາມປອດໄພທາງຖະໜົນທີ່ເໝາະສົມ ເຊິ່ງຈະຖືກສະໜອງໃຫ້ເປັນສ່ວນຫນຶ່ງຂອງອົງປະກອບທີ **2** ການຫຼຸດຜ່ອນຜົນກະທົບກ່ອນການກໍ່ສ້າງ ລວມເຖິງຫຼຸດຜ່ອນຄວາມສ່ຽງຈາກລະເບີດບໍ່ທັນແຕກ (UXO) ການປະເມີນຄວາມສ່ຽງເຊັ່ນດຽວກັນກັບການປະຕິບັດ ແຜນການຍົກຍ້າຍຈັດສັນແບບຫຍໍ້ (ARAPs). ໄລຍະການກໍ່ສ້າງ ແລະຜົນກະທົບໄລຍະ O&M ຈະຖືກຄຸ້ມຄອງໂດຍຜ່ານການຮັບຮອງເອົາຂັ້ນຕອນການຫຼຸດຜ່ອນມາດຕະຖານ E&S ທີ່ສະໜອງໃຫ້ເປັນສ່ວນຫນຶ່ງຂອງ ESMF ນີ້.

## ການຈັດວາງການຈັດຕັ້ງປະຕິບັດ

8. ຂັ້ນຕອນທໍາອິດ, ກິດຈະກໍາທີ່ສະເຫນີທັງຫມົດຈະຖືກກວດສອບໂດຍຫນ່ວຍງານຄຸ້ມຄອງໂຄງການ MPWTs (PMU) **ເພື່ອ**ຮັບປະກັນວ່າພວກເຂົາຢູ່ໃນຂອບເຂດຂອງກິດຈະກໍາທີ່ມີສິດໄດ້ຮັບທຶນຈາກໂຄງການ ແລະ ພວກມັນບໍ່ໄດ້ຖືກພິຈາລະນາເປັນກິດຈະກໍາທີ່ຢູ່ໃນບັນຊີລາຍຊື່ການຍົກເວັ້ນ E&S ເຊິ່ງເປັນສ່ວນຫນຶ່ງຂອງ ESMF ສະບັບນີ້.

9. ອັນທີສອງ, ພະແນກໂຍທາທິການ ແລະ ຂົນສົ່ງແຂວງ (DPWT) ໜ່ວຍງານຈັດຕັ້ງປະຕິບັດໂຄງການ (PIU) ແລະ ທີ່ປຶກສາໂຄງການ ເຊິ່ງທັງສອງພາກສ່ວນເຮັດວຽກພາຍໃຕ້ PMU ຈະນໍາໃຊ້ແບບຟອມການກວດກາ E&S ເພື່ອກໍານົດ ແລະ ປະເມີນຄວາມສ່ຽງ E&S ທີ່ກ່ຽວຂ້ອງໂດຍກົງກັບກິດຈະກໍາຂອງໂຄງການ ແລ້ວກໍານົດມາດຕະການຄຸ້ມຄອງທີ່ເຫມາະສົມ. ແບບຟອມການກັ່ນກອງສະແດງລາຍການກ່ຽວກັບ ແຜນ ແລະ ມາດຕະການ ຄຸ້ມຄອງຕ່າງໆ ທີ່ອາດຈະກ່ຽວຂ້ອງກັບກິດຈະກໍາສະເພາະ ເຊັ່ນ: ການພັດທະນາແຜນການຄຸ້ມຄອງສິ່ງແວດລ້ອມ ແລະສັງຄົມສະເພາະພື້ນທີ່ (SS-ESMP) (ກວມເອົາຫົວຂໍ້ຕ່າງໆ ເຊັ່ນ: ສຸຂະພາບ ແລະ ຄວາມປອດໄພຂອງຊຸມຊົນ ແລະ ຂັ້ນຕອນການການຄຸ້ມຄອງແຮງງານ), ແຜນການຄຸ້ມຄອງຊີວະນາໆພັນສະເພາະພື້ນທີ່ (SS-BMP) ແລະ ARAPs. DPWT/PIU ແລະ ທີ່ປຶກສາໂຄງການຍັງຈະກໍານົດ ເອກະສານ, ໃບອະນຸຍາດ ແລະ ການຮັບຮອງທີ່ຈໍາເປັນພາຍໃຕ້ກົດລະບຽບດ້ານສິ່ງແວດລ້ອມ ຂອງລັດຖະບານ.

10. ອີງຕາມຜົນຂອງແບບຟອມການກັ່ນກອງ, PMU ໂດຍຜ່ານບໍລິສັດທີ່ປຶກສາດ້ານ E&S ອາດຈະພັດທະນາ **SS-**ESMPs, SS-BMPs ແລະ ARAP ທີ່ກ່ຽວຂ້ອງໂດຍອີງໃສ່ເອກະສານຊ້ອນທ້າຍທີ່ສະຫນອງໃຫ້ຢູ່ໃນ **ESMF** ສະບັບນີ້ ແລະ ກອບນະໂຍບາຍການຈັດສັນຍົກຍ້າຍ (RPF). PMU ຈະທົບທວນ ແລະ ອະນຸມັດແຜນການເຫຼົ່ານີ້ ເຊິ່ງຈະຖືກສົ່ງໃຫ້ກັບພາກສ່ວນທີ່ກ່ຽວຂ້ອງໃນລັກສະນະທີ່ສາມາດເຂົ້າເຖິງໄດ້. ນອກຈາກນັ້ນ, ຈະໄດ້ປຶກສາຫາລືກັບບັນດາຊຸມຊົນທີ່ໄດ້ຮັບຜົນກະທົບກ່ຽວກັບຄວາມສ່ຽງດ້ານສິ່ງແວດລ້ອມ ແລະ ສັງຄົມ ແລະ ມາດຕະການຫຼຸດຜ່ອນຜົນກະທົບ ແມ່ນອີງຕາມແຜນການມີສ່ວນຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງ (SEP) ທີ່ໄດ້ກະກຽມໄວ້ສໍາລັບໂຄງການ. SS-ESMPs ແລະ SS-BMPs ທັງໝົດ ຈະຖືກສົ່ງໃຫ້ທະນາຄານໂລກກວດກາ ແລະ ຮັບຮອງເສຍກ່ອນ. ພະແນກຄົ້ນຄວ້າສິ່ງແວດລ້ອມ ແລະ ປ້ອງກັນໄພພິບັດ/ສະຖາບັນໂຍທາທິການ ແລະ ຂົນສົ່ງ (EDPD/PTI) ຜ່ານບໍລິສັດທີ່ປຶກສາ **E&S** ຈະໄດ້ກະກຽມບົດລາຍງານການສຶກສາດ້ານສິ່ງແວດລ້ອມເບື້ອງຕົ້ນ (IEE) ເຊິ່ງກວມເອົາທຸກໂຄງການຍ່ອຍຂອງແຕ່ລະແຂວງ ແລະ ໄດ້ຮັບການຮັບຮອງຈາກ ພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມແຂວງ (PONRE) ກ່ອນທີ່ໂຄງການຍ່ອຍຈະເລີ່ມຕົ້ນ.

11. ຖ້າມີຄວາມຈໍາເປັນ, PMU ຈະກະກຽມ ແລະ ຮັບປະກັນວ່າ ARAP ມີການຈັດຕັ້ງປະຕິບັດຕາມຂອບນະໂຍບາຍການຈັດສັນຍົກຍ້າຍຂອງໂຄງການ (RFP) ກ່ອນການເລີ່ມຕົ້ນໂຄງການຍ່ອຍຕ່າງໆ ທີ່ຈະມີການຍຶດເອົາທີ່ດິນເອກະຊົນ ແລະ ມີການຍົກຍ້າຍສິ່ງປຸກສ້າງ.

## ການຕິດຕາມກວດກາ ແລະ ການລາຍງານ

12. DWPT/PIU ແລະ ທີ່ປຶກສາຂອງໂຄງການຈະເບິ່ງແຍງການປະຕິບັດວຽກງານປະຈໍາວັນ ແລະ ການຕິດຕາມມາດຕະການຫຼຸດຜ່ອນສິ່ງແວດລ້ອມ ແລະ ສັງຄົມ ແລ້ວລາຍງານຄວາມຄືບຫນ້າ ແລະ ການປະຕິບັດວຽກງານປະຈໍາເດືອນຕໍ່ PMU. ນອກຈາກນັ້ນ, DWPT/PIU ປຶກສາຂອງໂຄງການ ຈະສ້າງບົດລາຍງານການຕິດຕາມກວດກາປະຈໍາໄຕມາດກ່ຽວກັບ SS-ESMPs, SS-BMPs, ARAPs ແລະ SEP. ບົດລາຍງານປະຈໍາໄຕມາດຈະຖືກສົ່ງໃຫ້ PMU ເຊິ່ງເປັນຜູ້ລວບລວມ ແລ້ວສົ່ງໃຫ້ທະນາຄານໂລກທຸກໆ 6 ເດືອນ. EDPD/PTI ຈະຕ້ອງຮັບປະກັນວ່າໂຄງການໄດ້ປະຕິບັດຕາມຂໍ້ກໍານົດແຫ່ງຊາດກ່ຽວກັບ ຂໍ້ກໍານົດ ແລະ ມາດຕະຖານດ້ານ E&S. ການຮ້ອງທຸກ/ຄໍາຕິຊົມຂອງຜູ້ໄດ້ຮັບຜົນປະໂຫຍດ (ສອດຄ່ອງກັບ SEP) ຍັງຈະຖືກຕິດຕາມໃນລະຫວ່າງການຈັດຕັ້ງປະຕິບັດໂຄງການ ເຊັ່ນດຽວກັນກັບເຫດການຮ້າຍແຮງທີ່ກ່ຽວຂ້ອງກັບໂຄງການ ເຊິ່ງອາດຈະມີຜົນກະທົບທາງລົບຕໍ່ສິ່ງແວດລ້ອມ, ຊຸມຊົນ, ປະຊາຊົນ ຫຼື ຜູ້ອອກແຮງງານທີ່ຖືກກະທົບ.

## ການມີສ່ວນຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງ

13. ການກະກຽມເອກະສານ SEP ສໍາລັບໂຄງການນີ້ ແມ່ນໄດ້ກະກຽມເປັນເອກະສານທີ່ແຍກຕ່າງຫາກ ເຊິ່ງໄດ້ລວມເອົາແຜນການມີສ່ວນຮ່ວມຂອງກຸ່ມຊົນເຜົ່າ ໂດຍອີງຕາມ ມາດຕະຖານປົກປ້ອງສິ່ງແວດລ້ອມ ທີ 10 (ESS 10) ຂອງທະນາຄານໂລກ ກ່ຽວກັບການມີສ່ວນຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງ. ເອກະສານ **SEP** ລວມມີການພິຈາລະນາ ແລະ ຂໍ້ກໍານົດ ຂອງ ESS7 ເພື່ອສົ່ງເສີມການມີສ່ວນຮ່ວມຂອງກຸ່ມຊົນເຜົ່າໃນໂຄງການ ລວມເຖິງການອອກແບບ

ແລະ ການຈັດຕັ້ງປະຕິບັດໂຄງການຍ່ອຍ ແນ່ໃສ່ເພື່ອຫຼຸດຜ່ອນຜົນກະທົບທາງລົບທີ່ອາດຈະເກີດຂຶ້ນຕໍ່ພວກເຂົາທີ່ໄດ້ກໍານົດເປັນກຸ່ມຊົນເຜົ່າພາຍໃຕ້ ESS7. SEP ສາມາດເຫັນໄດ້ໃນ ເວບໄຊຂອງກະຊວງ ຍທຂ [ສະຫນອງການເຊື່ອມຕໍ່ການເປີດເຜີຍສໍາລັບ SEP].